# ບົດລາຍງານວິໄຈ

## ຫົວຂໍ້:

**ການພັດທະນາການສອນ ວິຊາວັດທະນະທຳລາວ, ອາຊຽນ ແລະ ມໍລະດົກໂລກ ກ່ຽວກັບໜ້າທີ່ຂອງພົນລະເມືອງອາຊຽນຕໍ່ກັບວັດທະນະທຳສັງຄົມໃນປັດຈຸບັນຂອງລາວ - ອາຊຽນ ໂດຍນຳໃຊ້ວິທີສອນແບບເອົາຜູ້ຮຽນເປັນໃຈກາງ ສຳລັບນັກສຶກສາຄູຄະນິດສາດ ປີ 2 ທີ່ ວິທະຍາໄລຄູບ້ານເກີນ.**

**THE DEVELOPMENT OF TEACHING THE LAOS - ASEAN CULTURAL STUDIES AND WORLD HERITAGE ON ASEAN CITIZENS' DUTIES TOWARDS CONTEMPORARY SOCIAL CULTURE OF LAOS - ASEAN BY USING THE LEARNER-CENTERED APPROACH FOR THE SECOND YEAR MATHEMATICS TEACHER STUDENTS AT BANKEUN TEACHER TRAINING COLLEGE**


**ຜູ້ວິໄຈ:** ອຈ ປທ ນາໂຍ ຄຳຫາ

**ເພື່ອນຮ່ວມວິໄຈ:** ປທ ສິດສົມບູນ ສຸທຳມະວົງ

ປທ ປິ່ງແກ້ວ ສີຣິສົມພອນ

ປທ ປະພັດສອນ ໄຊມູນຄຳ

**ວິທະຍາໄລຄູບ້ານເກີນ**


**ສົກສຶກສາ 2019 - 2020**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູບ້ານເກີນ ເລກທີ 842/ວຄກ

ວັນທີ 06 ກັນຍາ 2020

# ໃບຮັບຮອງຜົນງານ

ຜູ້ອຳນວຍການວິທະຍາໄລຄູບ້ານເກີນໄດ້ຮັບຮອງຜົນງານການຂຽນທາງວິຊາການທີ່ວຂໍ້:

**ການພັດທະນາການສອນວິຊາວັດທະນາທຳລາວ, ອາຊຽນ ແລະ ມໍລະດົກໂລກ ກ່ຽວກັບໜ້າທີ່ຂອງພົນລະເມືອງອາຊຽນຕໍ່ກັບວັດທະນະທຳສັງຄົມໃນປັດຈຸບັນຂອງ ລາວ-ອາຊຽນ ໂດຍນຳໃຊ້ວິທີສອນແບບເອົາຜູ້ຮຽນເປັນໃຈກາງ ສຳລັບນັກສຶກສາ ຄູຄະນິດສາດ ປີທີ 2 ສົກຮຽນ 2019 - 2020**

**ຜູ້ວິໄຈ:** **ທ່ານ ອຈ. ປທ. ນາໂຍ ຄຳຫາ**
**ເພື່ອນຮ່ວມວິໄຈ:** ທ່ານ ປທ. ນາງ ສິດສົມບູນ ສຸທຳມະວົງ
ທ່ານ ປທ. ປະພັດສອນ ໄຊມູນຄຳ
ທ່ານ ປທ. ປິ່ງແກ້ວ ສີຣິສົມພອນ

**ທີ່ປຶກສາ :** ທ່ານ ອຈ. ປທ. ບຸນມີ ກອງຈັນສະຫວັດ

ໄດ້ຮັບຮອງຈາກປະທານ ແລະ ຄະນະກຳມະການສະພາວິທະຍາສາດ ຄັ້ງວັນທີ 06 ກັນຍາ 2020 ທີ່ວິທະຍາໄລຄູບ້ານເກີນ.

ດັ່ງນັ້ນ ຜູ້ອຳນວຍການວິທະຍາໄລຄູບ້ານເກີນຈຶ່ງໄດ້ອອກໃບຮັບຮອງສະບັບນີ້ໃຫ້ແກ່ຜູ້ຂຽນ ແລະ ປະກາດໃຊ້ເປັນປະໂຫຍດເປັນທາງການ.

ຜູ້ອຳນວຍການ

ກະຊວງສຶກສາທິການ ແລະ ກິລາ
ວິທະຍາໄລຄູບ້ານເກີນ

ຈັນທະມາລາ ສຸທຳມະວົງ

ປະທານ ແລະ ຄະນະກຳມະການກວດສອບເນື້ອໃນ ແລະ ຮັບຮອງຜົນງານການຂຽນທາງວິຊາການ ຫົວຂໍ້:

**ການພັດທະນາການສອນວິຊາວັດທະນາທຳລາວ, ອາຊຽນ ແລະ ມໍລະດົກໂລກ ກ່ຽວກັບໜ້າທີ່ຂອງພົນລະເມືອງອາຊຽນຕໍ່ກັບວັດທະນະທຳສັງຄົມໃນປັດຈຸບັນຂອງ ລາວ-ອາຊຽນ ໂດຍນຳໃຊ້ວິທີສອນແບບເອົາຜູ້ຮຽນເປັນໃຈກາງ ສຳລັບນັກສຶກສາ ຄູຄະນິດສາດ ປີທີ 2 ສົກຮຽນ 2019 – 2020**

ຄັ້ງວັນທີ 06 ກັນຍາ 2020, ເປັນຜົນງານທີ່ສຳຄັນຕໍ່ການສຶກສາໃນວິທະຍາໄລຄູບ້ານເກີນ.

<u>ປະທານຄະນະກຳມະການ</u>

ທ່ານ ອຈ. ປທ. ປະຢັດ ວັດຕະນາ ..............................

<u>ຄະນະກຳມະການ</u>

ທ່ານ ອຈ. ປທ. ຖາວອນ ດວງວິຈິດ ..............................

ທ່ານ ອຈ. ປທ. ນາງ ສອນມີໄຊ ຈັນທະວົງ ..............................

ທ່ານ ອຈ. ປທ. ແປງໃຈ ແສງຈັນທະວົງ ..............................

ວິທະຍາໄລຄູບ້ານເກີນ

# ບົດຄັດຫຍໍ້

ການຂຽນວິໄຈກ່ຽວກັບ ການພັດທະນາການສອນ ວິຊາວັດທະນະທຳລາວ, ອາຊຽນ ແລະ ມໍລະດົກໂລກ ກ່ຽວກັບໜ້າທີ່ຂອງພົນລະເມືອງອາຊຽນຕໍ່ກັບວັດທະນະທຳສັງຄົມໃນປັດຈຸບັນຂອງລາວ - ອາຊຽນ ໂດຍນຳໃຊ້ວິທີສອນແບບເອົາຜູ້ຮຽນເປັນໃຈກາງ. ຄັ້ງນີ້ມີຈຸດປະສົງ: (1) ເພື່ອສຶກສາການຮຽນ-ການສອນວິຊາວັດທະນະທຳລາວ, ອາຊຽນ ແລະ ມໍລະດົກໂລກ ກ່ຽວກັບ ໜ້າທີ່ຂອງພົນລະເມືອງອາຊຽນຕໍ່ກັບວັດທະນະທຳສັງຄົມໃນປັດຈຸບັນຂອງລາວ ແລະ ອາຊຽນ ໂດຍນຳໃຊ້ວິທີສອນແບບເອົານັກສຶກສາເປັນໃຈກາງ.(2) ເພື່ອສຶກສາຜົນສຳເລັດການຮຽນ-ການສອນກ່ອນຮຽນ ແລະ ຫຼັງຮຽນ. ຮູບແບບຂອງການສຶດສອນແມ່ນໄດ້ນຳໃຊ້ວິທີສອນແບບສົນທະນາຖາມຕອບ ໄດ້ກຳນົດປະຊາກອນ ແລະ ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການວິໄຈຄັ້ງນີ້ ໄດ້ເລືອກເອົານັກສຶກສາຄູຄະນິດສາດປີ 2 ທີ່ ວິທະຍາໄລຄູບ້ານເກີນ.ໃນພາກຮຽນ 1 ໃນສົກຮຽນ 2019-2020 ເປັນຫ້ອງວິໄຈເຊິ່ງມີຈຳນວນນັກສຶກສາທັງໝົດ 20 ຄົນ ຍິງ 12 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການວິໄຈໃນຄັ້ງນີ້ປະກອບມີ ຮ່າງສັງເກດການສອນຂອງຄູແລະ ບົດທົດສອບກ່ອນຮຽນ ແລະ ຫຼັງຮຽນ. ການວິເຄາະຜົນແມ່ນໄດ້ທົດສອບຜົນການຮຽນຄັ້ງທີ 1 ພົບວ່າຜົນຂອງການທົດສອບນັກສຶກສາຄັ້ງທີ 1 ມີນັກສຶກສາກຸ່ມເປົ້າໝາຍຈຳນວນ 20 ຄົນ, ໃນການທົດສອບກ່ອນຮຽນໄດ້ຄະແນນລວມທັງໝົດເທົ່າກັບ 129 ຄະແນນ, ມີຄ່າສະເລ່ຍເທົ່າກັບ 6,45 ຄິດເປັນເປີເຊັນເທົ່າກັບ 64,5 %. ສ່ວນຜົນທົດສອບຫຼັງຮຽນໄດ້ຄະແນນລວມທັງໝົດ 152 ຄະແນນ, ມີຄ່າສະເລ່ຍເທົ່າກັບ 7,6 ຄິດເປັນເປີເຊັນ 76 %.

ສ່ວນຜົນການທົບສອບນັກສຶກສາຄັ້ງທີ 2 ພົບວ່າຜົນຂອງການທົດສອບ ມີນັກສຶກສາກຸ່ມເປົ້າໝາຍຈຳນວນ 20 ຄົນ, ໃນການທົດສອບກ່ອນຮຽນ ໄດ້ຄະແນນລວມທັງໝົດເທົ່າກັບ 101 ຄະແນນ, ມີຄ່າສະເລ່ຍເທົ່າກັບ 5,05 ຄິດເປັນເປີເຊັນເທົ່າກັບ 50,5 %. ສ່ວນຜົນທົດສອບຫຼັງຮຽນໄດ້ຄະແນນລວມທັງໝົດ 194 ຄະແນນ, ມີຄ່າສະເລ່ຍເທົ່າກັບ 9,7 ຄິດເປັນເປີເຊັນ 97 %.